ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ຫ້ອງການ

ເລກທີ 221/ຫກ.

ນະຄອນຫຼວງວຽງຈັນ, ວັນທີ 06 ກຸມພາ 2025

# ແຈ້ງການປະມູນ

**ເຖິງ:** ບໍລິສັດ ກໍ່ສ້າງສ້ອມແປງທົ່ວໄປ.

**ເລື່ອງ:** ເຊີນເຂົ້າຮ່ວມປະມູນໂຄງການສ້ອມແປງປັບປຸງຫໍພັກ 4 ຊັ້ນ ແລະ ອາຄານສູນຝຶກອົບຮົມ 4 ຊັ້ນ ຂອງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ;

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ **02 ພະຈິກ 2017**;
- ອີງຕາມແຜນງົບປະມານຂອງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ປະຈຳປີ 2025 ສະບັບເລກທີ 3368/ ກຜທ.ກຜ4, ລົງວັນທີ 26 ທັນວາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການສ້ອມແປງປັບປຸງຫໍພັກ 4 ຊັ້ນ ແລະ ອາຄານສູນຝຶກອົບຮົມ 4 ຊັ້ນ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ; ສະບັບເລກທີ 75/ສມປຊ, ລົງວັນທີ 21 ມັງກອນ 2025.

ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນຮັບຊາບ ເພື່ອເຂົ້າຮ່ວມໃນການປະມູນໂຄງການສ້ອມແປງປັບປຸງຫໍພັກ 4 ຊັ້ນ ແລະ ອາຄານສູນຝຶກອົບຮົມ 4 ຊັ້ນ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ; ເຊິ່ງປະກອບມີບັນດາມາດຖານເງື່ອນໄຂ ດັ່ງນີ້:

1. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງ ຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງສ້ອມແປງທົ່ວໄປ.
2. ບໍລິສັດທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ພະແນກແຜນການ-ການເງິນ ຜູ້ຮັບຜິດຊອບຊື່: ນ. ລຸນນີ ໄໝທະວີເພັດ ເບີໂທ 020 55053102 ແລະ ທ ອຸ່ນເຮືອນ ວົງພະຈັນ ເບີ 020 56434441 ໃນໂມງລັດຖະການ.
3. ບໍລິສັດໃດທີ່ຕ້ອງການຊື້ຊອງປະມູນຕ້ອງມາຕິດຕໍ່ພົວພັນກັບພແນກແຜນການ-ການເງິນ ຂອງ ສມປຊ ແມ່ນເລີ່ມຂາຍຊອງນັບແຕ່ 7 ກຸມພາ 2025 ເປັນຕົ້ນໄປ, ໃນລາຄາ **5.000.000 ກີບ (ຫ້າລ້ານກີບ)**, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.

Scanned with ACE Scanner

4. ຊອງປະມູນຕ້ອງສົ່ງກ່ອນເວລາ 13:30 ໂມງ ຂອງວັນທີ 13 ມີນາ 2025 ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ຊອງປະມູນລາຄາທຸກໆ ຊອງຈະໄດ້ເປີດໃນເວລາ 13:30 ໂມງ ຂອງວັນທີ 13 ມີນາ 2025 ໂດຍຊ່ອງໜ້າຄະນະຮັບຜິດຊອບໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.
5. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຫລື ເງິນສົດ ຢ່າງໜ້ອຍບໍ່ໃຫ້ຫລຸດ 02% ຂອງລາຄາທີ່ສະເໜີເຂົ້າປະມູນ.
6. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເບີໂທຕິດຕໍ່ 021 752001, 020 55053102 ຫລື 020 56434441.

ດັ່ງນັ້ນ, ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຈຶ່ງຂໍແຈ້ງມາຍັງບັນດາບໍລິສັດຕ່າງໆເຂົ້າຮ່ວມການປະມູນຕາມວັນເວລາດ້ວຍ .

ເຊັນແທນ **ຫົວໜ້າຫ້ອງການ**

ບຸນທນາ ສີຫາລາດ

Scanned with ACE Scanner